ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງໄຊຍະບູລີ — ເລກທີ 62 /ສພຂ.ຊຍ

ໄຊຍະບູລີ, ລົງວັນທີ 28/..8../2023

# ມະຕິ
## ຂອງກອງປະຊຸມສະພາປະຊາຊົນແຂວງ
## ວ່າດ້ວຍການຮັບຮອງເອົາຜົນການປະເມີນຄວາມໄວ້ວາງໃຈ ໃນການປະຕິບັດໜ້າທີ່ ຂອງບຸກຄະລາກອນທີ່ສະພາປະຊາຊົນແຂວງ ເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ

- ອີງຕາມ ກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍ ສະພາປະຊາຊົນຂັ້ນແຂວງ ສະບັບປັບປຸງ ປີ 2016 ສະບັບເລກທີ 11/ສພຊ, ລົງວັນທີ 14 ພະຈິກ 2016 ມາດຕາ 13 ກ່ຽວກັບສິດ ແລະ ໜ້າທີ່ດ້ານການຕິດຕາມກວດກາ, ຂໍ້ 5 ກ່ຽວກັບການໃຫ້ຄະແນນ ເພື່ອປະເມີນຜົນຕໍ່ການປະຕິບັດໜ້າທີ່ ຂອງບຸກຄະລາກອນທີ່ສະພາປະຊາຊົນຂັ້ນແຂວງ ເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ;
- ອີງຕາມ ມະຕິຂອງຄະນະປະຈໍາສະພາປະຊາຊົນແຂວງ ສະບັບເລກທີ 63/ຄປຈ, ລົງວັນທີ 26/7/2023 (ສະບັບປັບປຸງ ປີ 2023) ວ່າດ້ວຍການປະເມີນຄວາມໄວ້ວາງໃຈ ໃນການປະຕິບັດໜ້າທີ່ ຂອງບຸກຄະລາກອນທີ່ສະພາປະຊາຊົນແຂວງ ເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ;
- ອີງຕາມ ມະຕິຂອງຄະນະປະຈໍາສະພາປະຊາຊົນແຂວງ ສະບັບເລກທີ 64/ຄປຈ, ລົງວັນທີ 26/7/2023 ວ່າດ້ວຍການແຕ່ງຕັ້ງຄວາມຮັບຜິດຊອບຄວາມໄວ້ວາງໃຈ ແລະ ຂໍ້ຕົກລົງ ເຈົ້າແຂວງສະບັບເລກທີ 1080/ຈຂ.ຊຍ, ລົງວັນທີ 4 ສິງຫາ 2023.

ຜ່ານການດໍາເນີນການໃຫ້ຄະແນນປະເມີນຄວາມໄວ້ວາງໃຈ ຂອງສະມາຊິກສະພາປະຊາຊົນແຂວງ ຕໍ່ການປະຕິບັດໜ້າທີ່ ຂອງບຸກຄະລາກອນດໍາລົງຕໍາແໜ່ງ ທີ່ສະພາປະຊາຊົນແຂວງ ເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ໃນກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາປະຊາຊົນແຂວງ ຊຸດທີ II, ຄັ້ງວັນທີ 25 ສິງຫາ 2023.

ກອງປະຊຸມ ຕົກລົງ:

ມາດຕາ 1: ຮັບຮອງເອົາບັນດາສະມາຊິກສະພາປະຊາຊົນແຂວງ ຈໍານວນ 37 ທ່ານ ເຂົ້າຮ່ວມກອງປະຊຸມ ເພື່ອປະເມີນຄວາມໄວ້ວາງໃຈ ຕໍ່ການປະຕິບັດໜ້າທີ່ ຂອງບຸກຄະລາກອນທີ່ສະພາປະຊາຊົນແຂວງ ເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ຈໍານວນ 74 ທ່ານ, ຍິງ 11 ທ່ານ ເຊິ່ງປະກອບມີ ດັ່ງນີ້:

1. ສະພາປະຊາຊົນແຂວງ ປະກອບ ມີ 13 ທ່ານ, ຍິງ 3 ທ່ານ;
   1) ປະທານສະພາປະຊາຊົນແຂວງ;
   2) ຮອງປະທານສະພາປະຊາຊົນແຂວງ 2 ທ່ານ, ຍິງ 1 ທ່ານ;
   3) ປະທານຄະນະກໍາມະການ 3 ທ່ານ;
   4) ເລຂາທິການສະພາປະຊາຊົນແຂວງ, ຍິງ 1 ທ່ານ;



สแกนด้วย CamScanner

5) ຮອງປະທານຄະນະກຳມະການ 6 ທ່ານ, ຍິງ 1 ທ່ານ.

2. ອົງການປົກຄອງແຂວງ ( ເຈົ້າແຂວງ, ຮອງເຈົ້າແຂວງ, ຫົວໜ້າພະແນກການ, ກົມກອງ, ເຈົ້າເມືອງ) ປະກອບ ມີ 31 ທ່ານ, ຍິງ 3 ທ່ານ ຄື:

1) ເຈົ້າແຂວງ;

2) ຮອງເຈົ້າແຂວງ 2 ທ່ານ;

3) ຫົວໜ້າພະແນກການ, ກົມກອງ ຂອງແຂວງ ມີ 17 ທ່ານ, ຍິງ 3 ທ່ານ;

4) ເຈົ້າເມືອງ ມີ 11 ທ່ານ;

3. ອົງການກວດກາລັດແຂວງ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ, ສານປະຊາຊົນເຂດ, ຜູ້ພິພາກສາ ປະກອບ ມີ 30 ທ່ານ, ຍິງ 5 ທ່ານ ຄື:

1) ປະທານອົງການກວດກາລັດແຂວງ;

2) ຫົວໜ້າອົງການໄອຍະການປະຊາຊົນແຂວງ;

3) ປະທານສານປະຊາຊົນແຂວງ;

4) ຮອງປະທານສານປະຊາຊົນແຂວງ 3 ທ່ານ;

5) ວ່າການປະທານສານປະຊາຊົນ ເຂດ I;

6) ປະທານສານປະຊາຊົນເຂດ II, ຍິງ 1 ທ່ານ;

7) ປະທານສານປະຊາຊົນເຂດ III;

8) ຮອງປະທານສານປະຊາຊົນເຂດ II, ຍິງ 1 ທ່ານ;

9) ຮອງທານສານປະຊາຊົນເຂດ III 1 ທ່ານ;

10) ຜູ້ພິພາກສາ ສານປະຊາຊົນແຂວງ-ເຂດ 19 ທ່ານ, ຍິງ 3 ທ່ານ.

**ມາດຕາ 2:** ຮັບຮອງເອົາຜົນການໃຫ້ຄະແນນປະເມີນຂອງສະມາຊິກສະພາປະຊາຊົນແຂວງ ຕໍ່ແຕ່ລະທ່ານ ເປັນແຕ່ລະປະເພດ ດັ່ງນີ້:

1. ສະພາປະຊາຊົນແຂວງ:

1) ປະເພດ ດີເລີດ ມີ ຈຳນວນ 1 ທ່ານ (ຄະແນນ 9);

2) ປະເພດ ດີ ມີ ຈຳນວນ 12 ທ່ານ, ຍິງ 3 ທ່ານ (ຄະແນນ 8 ມີ 12 ທ່ານ).

2. ອົງການປົກຄອງແຂວງ (ເຈົ້າແຂວງ, ຮອງເຈົ້າແຂວງ, ຫົວໜ້າພະແນກການ, ກົມກອງ, ເຈົ້າເມືອງ):

1) ປະເພດ ດີເລີດ ມີ ຈຳນວນ 1 ທ່ານ (ຄະແນນ 9);

2) ປະເພດ ດີ ມີ ຈຳນວນ 29 ທ່ານ, ຍິງ 3 ທ່ານ (ຄະແນນ 8 ມີ 25 ທ່ານ, ຄະແນນ 7 ມີ 4 ທ່ານ);

3) ປະເພດ ກາງ ມີ ຈຳນວນ 1 ທ່ານ (ຄະແນນ 6);

3. ອົງການກວດກາລັດແຂວງ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ, ສານປະຊາຊົນເຂດ, ຜູ້ພິພາກສາ.

1) ປະເພດ ດີ ມີ ຈຳນວນ 30 ທ່ານ, ຍິງ 5 ທ່ານ (ຄະແນນ 8 ມີ 7 ທ່ານ, ຄະແນນ 7 ມີ 23 ທ່ານ).



สแกนด้วย CamScanner

ມາດຕາ 3: ມອບໃຫ້ຄະນະປະຈຳສະພາປະຊາຊົນແຂວງ ລາຍງານຜົນການປະເມີນຄວາມໄວ້ວາງໃຈ ໃຫ້ຄະນະປະຈຳສະພາແຫ່ງຊາດ, ຄະນະປະຈຳພັກແຂວງ, ແຈ້ງຜົນການໃຫ້ຄະແນນຕໍ່ການຈັດຕັ້ງ ແລະ ບຸກຄົນ ເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດ.

- ມອບໃຫ້ຄະນະປະຈຳສະພາປະຊາຊົນແຂວງ, ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ, ສະມາຊິກສະພາປະຊາຊົນແຂວງ ສືບຕໍ່ຕິດຕາມກວດກາການຈັດຕັ້ງປະຕິບັດຕາມໜ້າທີ່ ຕາມຄວາມຮັບຜິດຊອບຂອງຕົນ ຕາມທີ່ກຳນົດໄວ້ໃນກົດໝາຍ.

ມາດຕາ 4: ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານສະພາປະຊາຊົນແຂວງ



สแกนด้วย CamScanner